ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 2268 /ກງ

ນະຄອນຫຼວງວຽງຈັນ, ວັນທີ 27 ກໍລະກົດ 2023

# ແຈ້ງການ

ເຖິງ: **- ຫົວໜ້າກົມພາສີ;**

**- ຫົວໜ້າພາສີປະຈຳແຂວງຈຳປາສັກ;**

**- ຜູ້ອຳນວຍການ ບໍລິສັດ ທ່າບົກວັງເຕົ່າ ຈຳກັດຜູ້ດຽວ.**

**ເລື່ອງ: ການປະຕິບັດລະບຽບການທາງພາສີ ຢູ່ທ່າບົກວັງເຕົ່າ.**

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ດຳລັດວ່າດ້ວຍທ່າບົກ ສະບັບເລກທີ 513/ລບ, ລົງວັນທີ 04 ສິງຫາ 2021;
- ອີງຕາມ ດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ ສະບັບເລກທີ 18/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ໃບສະເໜີຂອງກົມພາສີ ສະບັບເລກທີ 06629/ກພສ, ລົງວັນທີ 26 ກໍລະກົດ 2023.

ເພື່ອຍົກສູງປະສິດທິພາບໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ, ຮັບປະການການຄຸ້ມຄອງ ແລະ ຈັດເກັບລາຍຮັບງົບປະມານຢ່າງລວມສູນ, ຫຼຸດຜ່ອນຂັ້ນຕອນການແຈ້ງພາສີ ໃຫ້ກະທັດຮັດງ່າຍດາຍ ແນໃສ່ເພີ່ມທະວີການອຳນວຍຄວາມສະດວກທາງດ້ານພາສີ ແລະ ການຄ້າ, ຮັບປະກັນ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ ທີ່ ສປປ ລາວ ເຂົ້າເປັນພາຄີ ໂດຍສະເພາະແມ່ນ ສົນທິສັນຍາວ່າດ້ວຍທ່າບົກ ຂອງຄະນະກຳມະທິການ ອົງການສະຫະປະຊາຊາດດ້ານເສດຖະກິດ ແລະ ສັງຄົມ ປະຈຳພາກພື້ນອາຊີ-ປາຊີຟິກ (UNESCAP Intergovernmental Agreement on Dry Port) ໃຫ້ມີປະສິດທິຜົນ.

## ລັດຖະມົນຕີ ກະຊວງການເງິນ ອອກແຈ້ງການ ດັ່ງນີ້:

1. ສິນຄ້ານຳເຂົ້າ-ສົ່ງອອກ ແລະ ຜ່ານແດນ ຢູ່ ດ່ານພາສີສາກົນວັງເຕົ່າ ຕ້ອງດຳເນີນການແຈ້ງພາສີໂດຍສັງເຂບ ແລະ ແຈ້ງພາສີເປັນລາຍລະອຽດ ພ້ອມທັງ ຊຳລະຄ່າພາສີ-ອາກອນ, ຄ່າທຳນຽມຕ່າງໆ ຜ່ານລະບົບເອເລັກໂຕຣນິກຂອງກົມພາສີ ແລະ ດຳເນີນການກວດປ່ອຍສິນຄ້າ ຢູ່ທ່າບົກວັງເຕົ່າ ແບບລວມສູນຈຸດດຽວ ຕາມຫຼັກການບໍລິຫານຄວາມສ່ຽງ ທີ່ກົດໝາຍ ແລະ ລະບຽບການກຳນົດ ຢ່າງເຂັ້ມງວດ, ພາຍໃຕ້ການຄຸ້ມຄອງຂອງລັດຖະການພາສີ;
   - ການນຳເຂົ້າ-ສົ່ງອອກ ສິນຄ້າ ຂອງຜູ້ປະກອບການມາດຕະຖານເອອີໂອ ໃຫ້ດຳເນີນຂັ້ນຕອນການແຈ້ງພາສີ ແລະ ການກວດປ່ອຍສິນຄ້າ ຕາມກົນໄກການອຳນວຍຄວາມສະດວກ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

2. ມອບໃຫ້ ກົມພາສີ ປັບປຸງກົງຈັກການຈັດຕັ້ງ ໂດຍສັບຊ້ອນເຈົ້າໜ້າທີ່ພາສີ ໄປປະຈໍາການຢູ່ທ່າບົກວັງເຕົ່າ ເພື່ອດໍາເນີນການກວດກາຂໍ້ມູນດ້ານເອກະສານການແຈ້ງພາສີ, ກວດກາສິນຄ້າຕົວຈິງ ແລະ ກວດປ່ອຍສິນຄ້າ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ;
3. ມອບໃຫ້ ບໍລິສັດ ທ່າບົກວັງເຕົ່າ ຈໍາກັດຜູ້ດຽວ ພັດທະນາລະບົບເອເລັກໂຕຣນິກ ເຂົ້າໃນການຄຸ້ມຄອງສາງສິນຄ້າ ແລະ ເຊື່ອມໂຍງເຂົ້າກັບລະບົບເອເລັກໂຕຣນິກ ຂອງຂະແໜງພາສີ ເພື່ອຮັບປະກັນການຄຸ້ມຄອງ ການນໍາສິນຄ້າເຂົ້າ-ອອກສາງ ໃຫ້ມີຄວາມຮັດກຸມ, ປ້ອງກັນບໍ່ໃຫ້ມີຊ່ອງຫວ່າງໃນການຫຼົບຫຼີກພາສີທຸກຮູບແບບ ແລະ ໃຫ້ຈັດສັນຊ່ອງທາງບໍລິການສະເພາະແກ່ຜູ້ປະກອບການມາດຕະຖານເອອີໂອ ເພື່ອອໍານວຍຄວາມສະດວກໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
4. ແຈ້ງການສະບັບນີ້ ມີຜົນສັກສິດຈັດຕັ້ງປະຕິບັດ ນັບແຕ່ວັນທີ 01 ສິງຫາ 2023 ເປັນຕົ້ນໄປ, ລະບຽບການໃດທີ່ມີເນື້ອໃນຂັດກັບແຈ້ງການສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ລັດຖະມົນຕີ**

ສັນຕິພາບ ພົມວິຫານ